ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 1918 /ປທສ

ນະຄອນຫຼວງວຽງຈັນ, ວັນທີ: 16 ມິຖຸນາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະຖານຜະລິດຕະພັນ ແລະ ຄຸນນະພາບການບໍລິການໄປສະນີ

- ອີງຕາມ ກົດໝາຍວ່າດ້ວຍ ການໄປສະນີ (ສະບັບປັບປຸງ) ເລກທີ 45/ສພຊ, ລົງວັນທີ 25 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
- ອີງຕາມ ລະບຽບການຂອງສະຫະພາບໄປສະນີສາກົນ.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ມາດຕະຖານຜະລິດຕະພັນ ແລະ ຄຸນນະພາບການບໍລິການໄປສະນີ ເພື່ອໃຫ້ການບໍລິການມີປະສິດທິພາບ, ມີຄວາມສະດວກ, ວ່ອງໄວ, ປອດໄພ, ເຖິງທີ່ໝາຍຕົງເວລາ ແນໃສ່ຮັບປະກັນການນຳໃຊ້ຖືກຕ້ອງຕາມລະບຽບຫຼັກການ ແລະ ມາດຕະຖານເຕັກນິກສາກົນ.

**ມາດຕາ 2 ມາດຕະຖານ ຜະລິດຕະພັນ ແລະ ຄຸນນະພາບການບໍລິການໄປສະນີ**

ມາດຕະຖານຜະລິດຕະພັນໄປສະນີ ແມ່ນການກຳນົດຂະໜາດ, ນ້ຳໜັກຂອງຜະລິດຕະພັນໄປສະນີ, ໄລຍະເວລາການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີ ພາຍໃນປະເທດ ແລະ ການແຈກຢາຍເຄື່ອງຝາກຂາເຂົ້າຈາກຕ່າງປະເທດ ເພື່ອໃຫ້ໄດ້ຕາມເປົ້າໝາຍທີ່ກຳນົດໄວ້ ແລະ ສອດຄ່ອງກັບລະບຽບການສາກົນ.

ຄຸນນະພາບການບໍລິການໄປສະນີ ແມ່ນການຮັບປະກັນການບໍລິການໄດ້ຕາມມາດຕະຖານຕົວຊີ້ວັດທາງດ້ານເຕັກນິກທີ່ຖືກກຳນົດໂດຍ ສະຫະພາບໄປສະນີສາກົນ ແລະ ຄວາມເພິ່ງພໍໃຈຂອງຜູ້ໃຊ້ບໍລິການ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ຕົວຊີ້ວັດຄຸນນະພາບການບໍລິການໄປສະນີ** ໝາຍເຖິງ ມາດຕະຖານຄຸນນະພາບການບໍລິການ, ເຕັກນິກ ແລະ ຄວາມເພິ່ງພໍໃຈຂອງຜູ້ໃຊ້ບໍລິການໄປສະນີ;

**2. ຕົວຊີ້ວັດທາງດ້ານຄ່າຄວາມເພິ່ງພໍໃຈ** ໝາຍເຖິງ ຜົນການແກ້ໄຂບັນຫາໃຫ້ຜູ້ໃຊ້ບໍລິການ ໂດຍວັດແທກດ້ວຍ ການເກັບກໍາຂໍ້ມູນນໍາ ສູນບໍລິການລູກຄ້າ ແລະ ແບບຟອມສອບຖາມຈາກ ຜູ້ໃຊ້ບໍລິການ;

**3. ຂະໜາດ** ໝາຍເຖິງ ຄ່າຂອງການວັດແທກລວງກວ້າງ, ລວງຍາວ, ລວງສູງ ຫຼື ຄວາມໜາ ຂອງເຄື່ອງຝາກທາງໄປສະນີທີ່ຫຸ້ມຫໍ່ແລ້ວ ຊຶ່ງຄິດໄລ່ເປັນມິລີແມັດ;

**4. ນໍ້າໜັກ** ໝາຍເຖິງ ຄ່າຂອງການຊັ່ງເຄື່ອງຝາກທາງໄປສະນີທີ່ຫຸ້ມຫໍ່ແລ້ວ ຊຶ່ງຄິດໄລ່ເປັນກຣາມ;

**5. ວັນ + x** ໝາຍເຖິງ ການກໍານົດໄລຍະເວລາໃນການແຈກຢາຍເຄື່ອງຝາກທາງໄປສະນີ;

**6. ຖົງເມພິເສດ (M bag)** ໝາຍເຖິງ ຖົງໄປສະນີທີ່ບັນຈຸໜັງສືພິມ, ວາລະສານ, ປຶ້ມ ແລະ ເອກະສານຄ້າຍຄືກັບສິ່ງພິມທີ່ມີຜູ້ຮັບຄົນດຽວກັນ ຢູ່ໃນທີ່ຢູ່ດຽວກັນ;

**7. ບາໂຄດ** ໝາຍເຖິງ ລະຫັດຂອງເຄື່ອງຝາກທາງໄປສະນີ ເປັນເຄື່ອງໝາຍແທນຂໍ້ມູນທີ່ເຄື່ອງຈັກສາມາດອ່ານໄດ້ດ້ວຍແສງ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ໃຫ້ບໍລິການໄປສະນີ ຢູ່ ສປປ ລາວ.

## ໝວດທີ 2
## ມາດຕະຖານຜະລິດຕະພັນໄປສະນີ ແລະ ບາໂຄດ ( Barcode )

**ມາດຕາ 5 ມາດຕະຖານຂະໜາດຂອງຜະລິດຕະພັນໄປສະນີ**

ມາດຕະຖານຂະໜາດຂອງຜະລິດຕະພັນໄປສະນີ ມີດັ່ງລຸ່ມນີ້ :

<table>
<tr><th>ລ/ດ</th><th>ຜະລິດຕະພັນໄປສະນີ</th><th colspan="2">ມາດຕະຖານ</th><th>ເອກະສານອ້າງອີງ</th></tr>
<tr><td rowspan="2">1</td><td rowspan="2">ໄປສະນີພັນ<br>(Letter Post)</td><td rowspan="2">ຊອງຈົດໝາຍ<br>(Envelope)</td><td>1. ຈົດໝາຍຂະໜາດນ້ອຍ<br>- ຂະໜາດ ນ້ອຍສຸດ 90 x 140 ມມ<br>- ຂະໜາດໃຫຍ່ສຸດ 165 x 245 ມມ<br>- ຄວາມໜາ ສູງສຸດ 5 ມມ</td><td rowspan="2">Convention Article RL 124: Limits of size and weight for small letter (P) and large letter (G)</td></tr>
<tr><td>2. ຈົດໝາຍຂະໜາດໃຫຍ່<br>- ຂະໜາດ ນ້ອຍສຸດ 90 x 140 ມມ<br>- ຂະໜາດ ໃຫຍ່ສຸດ 305 x 381 ມມ<br>- ຄວາມໜາສູງສຸດ 20 ມມ</td></tr>
</table>



ນ

| | | | | |
|---|---|---|---|---|
| | | ຊອງຈົດໝາຍ ອາກາດ (Aerogram) | - ຂະໜາດນ້ອຍສຸດ 90 x 140 ມມ<br>- ຂະໜາດໃຫຍ່ສຸດ 110 x 220 ມມ<br>ໝາຍເຫດ : ສາມາດນະໂຍບາຍໄດ້ 2ມມ | Convention Article RL 123: Limits of size |
| | | ໄປສະນີບັດ (Postcard) | - ຂະໜາດ ນ້ອຍສຸດ 90 x 140 ມມ<br>- ຂະໜາດ ໃຫຍ່ສຸດ 120 x 235 ມມ<br>ໝາຍເຫດ : ສາມາດນະໂຍບາຍໄດ້ 2 ມມ | Convention Article RL 123: Limits of size |
| | | ສິ່ງພິມ ແລະ ສິ່ງຂອງຫໍ່ນ້ອຍ (Printed Papers and Small Packets) | - ຂະໜາດ ນ້ອຍສຸດ 90 x 140 ມມ.<br>ຖ້າເປັນກໍ້ : ສອງເທົ່າ ຂອງເສັ້ນຜ່າສູນກາງ ບໍ່ໃຫ້ຫຼຸດ 170 ມມ ແລະ ລວງຍາວ ບໍ່ເກີນ 100 ມມ.<br>- ຂະໜາດໃຫຍ່ສຸດ 900x 600 ມມ.<br>ຖ້າເປັນກໍ້ : ສອງເທົ່າ ຂອງເສັ້ນຜ່າສູນກາງ ບໍ່ໃຫ້ຫຼຸດ 1,040 ມມ ແລະ ລວງຍາວ ບໍ່ເກີນ 900 ມມ<br>ໝາຍເຫດ : ສາມາດນະໂຍບາຍໄດ້ 2 ມມ | Convention Article RL 123 Limits of size |
| 2 | ພັດສະດຸໄປສະນີ (Parcel Post) | - ຂະໜາດ ແຕ່ລະຂ້າງບໍ່ເກີນ 2,000 ມມ ຫຼື ລວງຍາວ ແລະ ລວງຮອບໃຫ່ຍສຸດບໍ່ເກີນ 3,000 ມມ. | | Convention Article RC 115 Limits of size |
| 3 | ໂລຊິດສະຕິກໄປສະນີ (Logistics Post) | - ຂະໜາດບໍ່ເກີນ ຂ້າງລະ 150 x 200 x 150 ຊມ (ລວງກວ້າງ x ລວງຍາວ x ລວງສູງ) | | |

**ມາດຕາ 6 ມາດຕະຖານນໍ້າໜັກຂອງຜະລິດຕະພັນໄປສະນີ**

ມາດຕະຖານນໍ້າໜັກຂອງຜະລິດຕະພັນໄປສະນີ ມີດັ່ງນີ້:

| ລ/ດ | ຜະລິດຕະພັນ | | ນໍ້າໜັກຕໍ່ຫໍ່/ຊອງ | ເອກະສານອ້າງອີງ |
|---|---|---|---|---|
| 1 | ໄປສະນີພັນ (Letter Post) | ຈົດໝາຍ (Letter) | - ນໍ້າໜັກສູງສຸດ 2 kg. | Convention Article 13 Basic Service |
| | | ໄປສະນີບັດ(Postcard) | - ນໍ້າໜັກສູງສຸດ 2 kg. | |
| | | ສິ່ງພິມ (Printed Papers) | - ນໍ້າໜັກສູງສຸດ 2 kg, ຍົກເວັ້ນໜັງສືເຫຼັ້ມດຽວ ຫຼື ຫຼາຍເຫຼັ້ມແຕ່ຢູ່ໃນຫໍ່ດຽວກັນສາມາດຝາກສົ່ງໄດ້ບໍ່ເກີນ 5 kg. | |



ຈ

| | | | | |
|---|---|---|---|---|
| | | | - ກໍລະນີຖົງເມພິເສດ M Bag ນ້ຳໜັກສູງສຸດ 30 kg. | |
| | | ເຄື່ອງ ສຳລັບ ຄົນຕາບອດ (Items for the blind) | - ນ້ຳໜັກສູງສຸດ 7 kg. | |
| | | ສິ່ງຂອງຫໍ່ນ້ອຍ (Small Packets) | - ນ້ຳໜັກສູງສຸດ 2 kg. | |
| 2 | ພັດສະດຸໄປສະນີ (Parcel Post) | | - ນ້ຳໜັກ ແຕ່ 2.1kg - 50 kg. | Convention Article RC 114 Special conditions relating to limits of weight |
| 3 | ໂລຊິດສະຕິກໄປສະນີ (Logistics Post) | | - ນ້ຳໜັກແຕ່ 50.1 kg- 200 kg. | |

**ມາດຕາ 7 ມາດຕະຖານ ແລະ ປະເພດຂອງບາໂຄດ ( Barcode )**

1. ມາດຕະຖານຂອງບາໂຄດ ຕ້ອງປະກອບມີ ດັ່ງນີ້:
   - ຂະໜາດ 26 x 74 ມມ;
   - ລະຫັດ 13 ຕົວ ໃນນັ້ນ ມີອັກສອນອັງກິດຕົວພິມໃຫຍ່ 2 ຕົວ ຢູ່ດ້ານໜ້າທີ່ເປັນລະຫັດຫຍໍ້ ຂອງຜະລິດຕະພັນ, ຕໍ່ດ້ວຍຕົວເລກສາກົນ ຈຳນວນ 9 ຕົວຢູ່ລະຫວ່າງກາງ ແລະ ລົງທ້າຍ ດ້ວຍອັກສອນອັງກິດຕົວພິມໃຫຍ່ 2 ຕົວ ທີ່ເປັນລະຫັດຫຍໍ້ຊື່ ຂອງປະເທດ;
   - ເສັ້ນຂີດລວງຂວາງກ້ອງລະຫັດບາໂຄດ ເປັນສີແດງ ຫຼື ສີດຳ;
   - ເສັ້ນລະຫັດບາໂຄດເປັນແນວຕັ້ງ ແລະ ໃຫ້ສາມາດອ່ານຜ່ານເຄື່ອງຈັກອ່ານດ້ວຍແສງໄດ້;
   - ເຈ້ຍ ແລະ ນ້ຳມຶກທີ່ໃຊ້ຜະລິດບາໂຄດ ຕ້ອງທົນທານຕໍ່ການຮູກຖູ ແລະ ກັນນ້ຳໄດ້.
2. ບາໂຄດ ປະກອບມີ 4 ປະເພດ ດັ່ງນີ້:
   - ລະຫັດ **R** ສຳລັບ ໄປສະນີພັນລົງທະບຽນ (Registered items);
   - ລະຫັດ **C** ສຳລັບ ພັດສະດຸໄປສະນີ (Parcel Post);
   - ລະຫັດ **E** ສຳລັບ ໄປສະນີດ່ວນພິເສດ (Express Mail Service);
   - ລະຫັດ **V** ສຳລັບ ໄປສະນີຄ້ຳປະກັນ (Insured items).

ສ່ວນລາຍລະອຽດຂອງການຜະລິດບາໂຄດ ແມ່ນໃຫ້ປະຕິບັດຕາມ ລະບຽບການສະເພາະຂອງສະຫະພາບໄປສະນີສາກົນ.



ຟ

## ໝວດທີ 3
## ມາດຕະຖານຄຸນນະພາບການບໍລິການໄປສະນີ

**ມາດຕາ 8 ມາດຕະຖານຄຸນນະພາບການບໍລິການໄປສະນີ**

ມາດຕະຖານຄຸນນະພາບການບໍລິການໄປສະນີ ປະກອບມີ ດັ່ງນີ້:

1. ມາດຕະຖານຄຸນນະພາບການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີພາຍໃນປະເທດ;
2. ມາດຕະຖານຄຸນນະພາບການແຈກຢາຍເຄື່ອງຝາກຂາເຂົ້າຈາກ ຕ່າງປະເທດ.

**ມາດຕາ 9 ມາດຕະຖານຄຸນນະພາບການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງ ໄປສະນີພາຍໃນປະເທດ**

ຜູ້ໃຫ້ບໍລິການໄປສະນີ ຕ້ອງຮັບປະກັນຄຸນນະພາບ ການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງໄປສະນີ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນຕາຕະລາງລຸ່ມນີ້:

| ລ/ດ | ຕົວຊີ້ວັດ | ການບໍລິການ | ພື້ນທີ່ | ໄລຍະເວລາ | ການກວດກາ ແລະ ວັດແທກ | ໝາຍເຫດ |
|---|---|---|---|---|---|---|
| 1 | ອັດຕາສ່ວນຜົນສຳເລັດຂອງການແຈກຢາຍເຄື່ອງຝາກຫຼາຍກວ່າ ຫຼື ເທົ່າກັບ 95 % | ເຄື່ອງຝາກທຳມະດາ | ເຂດ 1 | ວັນ + 2 | ຈຳນວນເຄື່ອງຝາກ 100 ຫໍ່ ຫຼື ຊອງ ໃນ 1 ອາທິດ ໃນເຂດທີ່ມີຫ້ອງການໄປສະນີ | ເຄື່ອງຝາກຈາກຕ່າງແຂວງ ຫາ ນະຄອນຫຼວງ ແລະ ນະຄອນຫຼວງ ຫາ ຕ່າງແຂວງ<br><br>ສະເພາະ ວັນ, ເວລາ ລັດຖະການ |
| | | | ເຂດ 4 | ວັນ + 3 | | |
| | | | ເຂດ 3 ແລະ 5 | ວັນ + 4 | | |
| | | | ເຂດ 2 ແລະ 6 | ວັນ + 5 | | |
| | | ເຄື່ອງຝາກດ່ວນ | ເຂດ 1 | ວັນ + 1 | | |
| | | | ເຂດ 4 | ວັນ + 2 | | |
| | | | ເຂດ 3 ແລະ 5 | ວັນ + 3 | | |
| | | | ເຂດ 2 ແລະ 6 | ວັນ + 4 | | |

**ມາດຕາ 10 ມາດຕະຖານຄຸນນະພາບການແຈກຢາຍເຄື່ອງຝາກຂາເຂົ້າຈາກຕ່າງປະເທດ**

ຜູ້ໃຫ້ບໍລິການໄປສະນີ ຕ້ອງຮັບປະກັນຄຸນນະພາບ ການແຈກຢາຍເຄື່ອງຝາກຂາເຂົ້າຈາກຕ່າງປະເທດ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນຕາຕະລາງລຸ່ມນີ້:

| ລ/ດ | ຕົວຊີ້ວັດ | ການບໍລິການ | ເຂດແຈກຢາຍ | ໄລຍະເວລາ | ການກວດກາ ແລະ ວັດແທກ | ໝາຍເຫດ |
|---|---|---|---|---|---|---|
| 1 | ອັດຕາສ່ວນຜົນສຳເລັດຂອງການແຈກຢາຍເຄື່ອງຝາກຫຼາຍກວ່າ ຫຼື ເທົ່າກັບ 95 % | ເຄື່ອງຝາກທຳມະດາ | ເຂດ 1 | ວັນ + 2 | ຈຳນວນເຄື່ອງຝາກ 100 ຫໍ່ ຫຼື ຊອງໃນ 1 ອາທິດໃນເຂດທີ່ມີຫ້ອງການໄປສະນີ | ແຈກຢາຍ ສະເພາະ ວັນ, ເວລາ ລັດຖະການ |
| | | | ເຂດ 3, 4 ແລະ 5 | ວັນ + 3 | | |
| | | | ເຂດ 2 ແລະ 6 | ວັນ + 4 | | |
| | | ເຄື່ອງຝາກດ່ວນ | ເຂດ 1 | ວັນ + 1 | | |
| | | | ເຂດ 3, 4 ແລະ 5 | ວັນ + 2 | | |
| | | | ເຂດ 2 ແລະ 6 | ວັນ + 3 | | |

ມາດຕາ 11 ການກຳນົດເຂດແຈກຢາຍ ເຄື່ອງຝາກທາງໄປສະນີ

ເຂດແຈກຢາຍເຄື່ອງຝາກທາງໄປສະນີ ໄດ້ກຳນົດເປັນ 6 ເຂດ ດັ່ງລຸ່ມນີ້:

| ເຂດ 1 | ເຂດ 2 | ເຂດ 3 | ເຂດ 4 | ເຂດ 5 | ເຂດ 6 |
|---|---|---|---|---|---|
| - ນະຄອນຫຼວງ<br>- ວຽງຈັນ<br>- ບໍລິຄຳໄຊ | - ຫຼວງນ້ຳທາ<br>- ບໍ່ແກ້ວ<br>- ຜົ້ງສາລີ | - ຊຽງຂວາງ<br>- ໄຊສົມບູນ<br>- ຫົວພັນ | - ຫຼວງພະບາງ<br>- ໄຊຍະບູລີ<br>- ອຸດົມໄຊ | - ຄຳມ່ວນ<br>- ສະຫວັນນະເຂດ<br>- ຈຳປາສັກ | - ສາລະວັນ<br>- ເຊກອງ<br>- ອັດຕະປື |

## ໝວດທີ 4
## ການກວດກາ, ການເກັບກຳຂໍ້ມູນ ແລະ ການລາຍງານ

**ມາດຕາ 12 ການກວດກາມາດຕະຖານຜະລິດຕະພັນ ແລະ ຄຸນນະພາບການບໍລິການໄປສະນີ**

ການກວດກາມາດຕະຖານຜະລິດຕະພັນ ແລະ ຄຸນນະພາບການບໍລິການໄປສະນີ ປະກອບມີ:

1. ການກວດກາມາດຕະຖານຜະລິດຕະພັນໄປສະນີ;
2. ການກວດກາຄຸນນະພາບການບໍລິການ;
3. ການກວດກາຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການ.

**ມາດຕາ 13 ການກວດກາມາດຕະຖານຜະລິດຕະພັນໄປສະນີ**

ການກວດກາມາດຕະຖານຜະລິດຕະພັນໄປສະນີ ແມ່ນການກວດກາມາດຕະຖານຂະໜາດ, ນ້ຳໜັກ ຂອງເຄື່ອງຝາກທາງໄປສະນີ ແລະ ຄຸນນະພາບຂອງບາໂຄດຢູ່ກັບຫ້ອງການໄປສະນີໃດໜຶ່ງ ໂດຍອີງໃສ່ບັນດາມາດຕະຖານ ທີ່ໄດ້ກຳນົດໄວ້ໃນມາດຕາ 5, 6 ແລະ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 14 ການກວດກາຄຸນນະພາບການບໍລິການ**

ການກວດກາຄຸນນະພາບການບໍລິການ ແມ່ນການກວດກາອັດຕາສ່ວນຜົນສຳເລັດຂອງການແຈກຢາຍເຄື່ອງຝາກ ຢູ່ກັບຫ້ອງການໄປສະນີໃດໜຶ່ງ ໂດຍອີງໃສ່ບັນດາຕົວຊີ້ວັດທາງດ້ານຄຸນນະພາບ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 15 ການກວດກາຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການ**

ການກວດກາຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການ ປະກອບມີ:

1. ການກວດກາຈາກແບບສອບຖາມ ແມ່ນການກວດກາໂດຍການສຳພາດ ຫຼື ການນຳໃຊ້ແບບຟອມສອບຖາມຈາກຜູ້ໃຊ້ບໍລິການ;

2. ການກວດກາຈາກລະບົບ ຂອງຜູ້ໃຫ້ບໍລິການ ແມ່ນການກວດກາ ໂດຍອີງໃສ່ຜົນ ຂອງການລາຍງານຕົວຊີ້ວັດທາງດ້ານຄ່າຄວາມເພິ່ງພໍໃຈ ແລະ ການຕິຊົມ ຂອງຜູ້ໃຊ້ບໍລິການຈາກ ລະບົບສູນສອບຖາມຂໍ້ມູນ (call center).

**ມາດຕາ 16 ການເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນ ແມ່ນການຈັດກ່າຍ, ການບັນທຶກ ຜົນຂອງການກວດກາຕົວຈິງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13, 14 ແລະ 15 ຂອງ ຂໍ້ຕົກລົງສະບັບນີ້.

ການເກັບກຳຂໍ້ມູນ ຕ້ອງດຳເນີນການ ເປັນງວດ ແລະ ປີ ຢ່າງເປັນປົກກະຕິ ເພື່ອປະເມີນຜົນການຈັດຕັ້ງປະຕິບັດທາງດ້ານມາດຕະຖານຜະລິດຕະພັນ ແລະ ຄຸນນະພາບການບໍລິການ ຂອງຜູ້ໃຫ້ບໍລິການໄປສະນີ.

**ມາດຕາ 17 ການລາຍງານ**

ຜູ້ໃຫ້ບໍລິການໄປສະນີ ຕ້ອງສົ່ງບົດລາຍງານ ກ່ຽວກັບ ຜົນຂອງຄຸນນະພາບການບໍລິການໄປສະນີ ແລະ ຄ່າຄວາມເພິ່ງພໍໃຈ ຂອງຜູ້ໃຊ້ບໍລິການ ປະຈຳງວດ ແລະ ປີ ໃຫ້ແກ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 5
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ແລະ ປັບໃໝ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມອບໃຫ້ກົມໄປສະນີເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ລັດຖະມົນຕີ**

ປອ. ທັນສະໄໝ ກົມມະສິດ